EAT 5 A DAY for better health

ໃຫ້ການຊ່ວຍເຫຼືອດ້ານ
ໂພຊະນາການແກ່ຄົນທຸກໄວ

ໃບສະໝັກສຳຫຼັບ

ສະຫວັດດີການ ຄ່າອາຫານ

ປະຕິບັດຕາມຂັ້ນຕອນງ່າຍດາຍຕໍ່ໄປນີ້ ເພື່ອສະໝັກຂໍສະຫວັດດີການຄ່າ ອາຫານ.

ໝາຍເຫດ: ຖ້າທ່ານພິການ ຫຼື ຕ້ອງການຄວາມຊ່ວຍເຫຼືອ ໃນການຕື່ມ ແບບຟອມນີ້, ກະລຸນາແຈ້ງໃຫ້ເຈົ້າໜ້າທີ່ຊາບ ແລະ ຈະມີຜູ້ຊ່ວຍເຫຼືອທ່ານ.

ຂັ້ນຕອນ 1: ຕື່ມຂໍ້ມູນໃນໃບສະໝັກນີ້ໃຫ້ຫຼາຍເທົ່າທີ່ຈະຫຼາຍໄດ້, ເຊັນໃສ່ໜ້າ 1 ແລະ ສົ່ງໃຫ້ສຳນັກງານສະຫວັດດີການຄ່າອາຫານໃນເຂດຂອງທ່ານ. ຢ່າງໜ້ອຍ ພວກເຮົາຕ້ອງການຊື່ນາມສະກຸນ ທີ່ຢູ່ ແລະ ລາຍເຊັນ ຂອງທ່ານ. **ຖ້າທ່ານບໍ່ມີ ເງິນຊື້ອາຫານ, ທ່ານອາດສາມາດໄດ້ຮັບສະຫວັດດີການຄ່າອາຫານສຸກເສີນພາຍ ໃນເວລາ ສາມ (3) ວັນ. ຖ້າທ່ານຕ້ອງຕອບໝົດທຸກຂໍ້ ໂດຍການກາກະບາດ (✔) ຄຳຖາມ ໃນໝົດທຸກໜ້າ.**

ຂັ້ນຕອນ 2: ທ່ານຈະໄດ້ຮັບການນັດໝາຍເພື່ອສຳພາດກັບ ພະນັກງານ ສະຫວັດດີການຄ່າອາຫານ ຜູ້ທີ່ຈະອ່ານໃບສະໝັກນີ້ກັບທ່ານ ແລະຈະຖາມ ຄຳຖາມເພີ່ມເຕີມຈາກທ່ານ ເພື່ອສິ້ນສຸດຂັ້ນຕອນການສະໝັກ.

ຂັ້ນຕອນ 3: ທ່ານຕ້ອງນຳຫຼັກຖານສະແດງຕົນເອງ ແລະ ລາຍໄດ້ມາພ້ອມ ໃນເວລາສຳພາດ. ທ່ານຄວນນຳຫຼັກຖານຢ່າງອື່ນມາດ້ວຍ ເຊັ່ນ ບິນຄ່າເຊົ່າ, ບິນຄ່ານ້ຳຄ່າໄຟ ຫຼື ສິ້ນເຊັກຄ່າແຮງ. ຖ້າທ່ານບໍ່ລາຍງານແລະສະແດງຫຼັກຖານ ການໃຊ້ຈ່າຍ, ຈະບໍ່ມີການຫັກຄ່າໃຊ້ຈ່າຍເຫຼົ່ານັ້ນຈາກລາຍໄດ້ຂອງທ່ານ.

ຂໍ້ມູນສຳຄັນສຳຫຼັບຄົນເຂົ້າເມືອງ

- ➤ ທ່ານສາມາດສະໝັກເພື່ອຮັບເອົາສະຫວັດດີການຄ່າອາຫານ ສຳລັບສະມາຊິກ ຄອບຄົວທີ່ມີເງື່ອນໄຂເໝາະສົມ, ເຖິງແມ່ນວ່າຄອບຄົວຂອງທ່ານປະກອບມີສະ ມາຊິກທີ່ບໍ່ມີເງື່ອນໄຂຄົບຖ້ວນ ເນື່ອງຈາກສະຖານະພາບການ ເຂົ້າເມືອງກໍ່ຕາມ. ຕົວຢ່າງ, ພໍ່ແມ່ທີ່ເປັນຜູ້ອົບພະຍົບອາດສະໝັກເພື່ອຮັບເອົາສະຫວັດດີການຄ່າ ອາຫານ ໃຫ້ລູກທີ່ເປັນພົນລະເມືອງ ຫລື ເດັກນ້ອຍອົບພະຍົບທີ່ຢູ່ໃນເງື່ອນໄຂ, ເຖິງແມ່ນວ່າພໍ່ແມ່ອາດຈະບໍ່ຢູ່ໃນ ເງື່ອນໄຂການໄດ້ຮັບສະຫວັດດີການດັ່ງກ່າວ.
- ➤ ທ່ານບໍ່ຈຳເປັນຕ້ອງໃຫ້ຂໍ້ມູນກ່ຽວກັບສະຖານະພາບການເຂົ້າເມືອງ, ເລກປະກັນສັງຄົມ, ຫຼື ເອກະສານກ່ຽວກັບ ສະມາຊິກຄອບຄົວຜູ້ທີ່ບໍ່ມີສິດ ໄດ້ຮັບສະຫວັດດີການຄ່າອາຫານ ຍ້ອນສະຖານະພາບການເຂົ້າເມືອງ ແລະ ຜູ້ທີ່ບໍ່ໄດ້ສະໝັກຂໍສະຫວັດດີການຄ່າອາຫານ.
- ➤ ການຮັບສະຫວັດດີການຄ່າອາຫານ ຈະບໍ່ມີຜົນຕໍ່ສະຖານະພາບການເຂົ້າເມືອງ ຂອງທ່ານ ຫຼື ຂອງຄອບຄົວທ່ານ. ຂໍ້ມູນການເຂົ້າເມືອງ ຖືວ່າເປັນຂໍ້ມູນສ່ວນຕົວ ແລະ ເປັນຄວາມລັບ.

ການສະໝັກຂໍສະຫວັດດີການຄ່າອາຫານ

ຂໍ້ມູນ ແລະ ເຄັດລັບທີ່ຄວນຮູ້

ກະລຸນາອ່ານຂໍ້ມູນລຸ່ມນີ້ ບໍ່ຕ້ອງຕື່ມຂໍ້ມູນຫຍັງໃນໜ້ານີ້.

ແຕ່ລະຄຳ ມີຄວາມໝາຍແນວໃດ

ເພື່ອຊ່ວຍໃຫ້ທ່ານເຂົ້າໃຈບາງຄຳສັບທີ່ໃຊ້ໃນໃບສະໝັກ ແລະ ໃນການສຳພາດ, ກະລຸນາເບິ່ງຄຳນິຍາມ ດັ່ງລຸ່ມນີ້.

ທ່ານ, ທຸກຄົນ, ແຕ່ລະຄົນ — ບຸກຄົນໃດໜຶ່ງ ແລະ ໝົດທຸກຄົນ ຜູ້ທີ່ຢູ່ໃນບ້ານ ແລະ ຜູ້ທີ່ສະໝັກຂໍສະຫວັດດີການຄ່າອາຫານ. ຖ້າພວກເຮົາຕ້ອງການ ຂໍ້ມູນກ່ຽວກັບ ຄົນອື່ນໆໃນບ້ານຂອງທ່ານ, ພວກເຮົາຈະຖາມທ່ານ.

ຄອບຄົວຂອງທ່ານ — ບຸກຄົນທີ່ອາໃສໃນບ້ານ ຊຶ່ງຊື້ ແລະ ແຕ່ງກິນຮ່ວມກັນ ແລະ ກຳລັງສະໝັກຂໍສະຫວັດດີການຄ່າອາຫານ.

ສະຫວັດດີການຄ່າອາຫານ — ສະຫວັດດີການເພື່ອຊ່ວຍເຫຼືອໃນການຊື້ອາຫານ ສຳຫຼັບຄອບຄົວມີລາຍໄດ້ຕຳ່.

ບໍລິການສະຫວັດດີການຄ່າອາຫານແບບກະທັດຮັດ — ສະຫວັດດີການຄ່າອາຫານ ທີ່ໃຫ້ທ່ານໄດ້ພາຍໃນສາມ (3) ວັນ.

ຊັບສິນ — ເງິນທີ່ທ່ານມີ ເຊັ່ນ:

- ເງິນສົດໃນມື, ເຊັກທີ່ບໍ່ທັນໄດ້ຂຶ້ນເງິນ, ເງິນໃນບັນຊີເດີນສະພັດ, ບັນຊີເງິນຝາກປະຢັດ ຫຼື ໃບຮັບຮອງການຝາກເງິນ ແລະ ອື່ນໆ.
- ສະໂນດຊັບສິນ, ໃບສັນຍາຮັບເງິນ, ຫຸ້ນ ຫຼື ພັນທະບັດ ແລະ ອື່ນໆ.

ຄ່າສາທາລະນູປະໂພກ — ຄ່າແກສ, ໄຟຟ້າ, ຄວາມຮ້ອນ, ນຳ້ມັນ, ໂທລະສັບ (ອັດຕາພື້ນຖານ), ຕິດຕັ້ງສາທາລະນູປະໂພກ, ເກັບຂີ້ເຫຍື້ອ, ນຳ້, ນຳ້ເສຍ ແລະອື່ນໆ.

ລາຍໄດ້ — ເງິນທີ່ໄດ້ຮັບ ຫຼື ຄາດວ່າຈະໄດ້ຮັບພາຍໃນເດືອນ ເຊັ່ນ:

- ລາຍໄດ້, ສະຫວັດດີການ, ເງິນລູກດູບຸດ, SSI ຫຼື ປະກັນສັງຄົມ, ຫຼື ສະຫວັດດີການທະຫານຜ່ານເສີກ
- ເງິນບຳເນັດ ຫຼື ບຳນານ
- ເງິນປະກັນວ່າງງານ (UIB), ພິການ (SDI) ຫຼື ເສຍອົງຄະອື່ນໆ
- ກອງທຶນນັດຢຸດງານ, ເງິນຈ່າຍຈາກຜູ້ເຊົ່າຫ້ອງ, ທຶນ ແລະ ເງິນກູ້ເພື່ອການສຶກສາ
- ຂອງຂວັນເງິນສົດ, ລາງວນເງິນສົດ ຫຼື ລາຍຮັບເງິນສົດອື່ນໆ

ເງິນສະຫວັດດີການ — ໂອກາດ ແລະ ຄວາມຮັບຜິດຊອບ ໃນການເຮັດວຽກ ສຳຫຼັບເດັກ (CalWORKs), ເງິນຊ່ວຍເຫຼືອຜູ້ຫຼົບໄພ, ຫຼື ໂຄງການເງິນສະຫວັດດີການ ໃນເທດສະບານຂອງທ່ານ [ເງິນຊ່ວຍເຫຼືອທົ່ວໄປ ຫຼື ເງິນບັນເທົາທົ່ວໄປ (GA/GR), ຫຼື ໂຄງການຊ່ວຍເຫຼືອສຳຫຼັບຄົນອົບພະຍົບ (CAPI)].

ສິ່ງອື່ນໆ ທີ່ທ່ານຄວນຮູ້

- **ທ່ານອາດສົງໃສວ່າເປັນຫຍັງພວກເຮົາຈຶ່ງຖາມບາງຄຳຖາມຈາກທ່ານ. ທຸກຄຳຖາມ ແມ່ນກຳນົດໃນກົດໝາຍລັດຖະບານກາງ/ລັດ ເພື່ອພິຈາລະນາສິດໃນການໄດ້ຮັບ ສະຫວັດດີການຄ່າອາຫານຂອງທ່ານ.**
- ທ່ານສາມາດສະໝັກຂໍສະຫວັດດີການຄ່າອາຫານ ແລະ ເງິນສະຫວັດດີການ ພ້ອມກັນ ແລະ ຈຳເປັນຕ້ອງໃຫ້ການສຳພາດພຽງຄັ້ງດຽວ, ຍົກເວັ້ນ ເມື່ອທ່ານສະໝັກຂໍເງິນ ສະຫວັດດີການຈາກໂຄງການຊ່ວຍເຫຼືອ/ບັນເທົາທົ່ວໄປ ຂອງເທດສະບານ (GA/GR).
- ຖ້າສະຫວັດດີການຄ່າອາຫານ, ເອກະສານອະນຸມັດ (AD) ຫຼື ບັດທີ່ອອກ ເສຍໃນ ລະຫວ່າງສົ່ງໄປສະນີ, ທ່ານຕ້ອງລາຍງານ ກ່ອນທ້າຍເດືອນຂອງເດືອນທີ່ທ່ານຄວນ ຈະໄດ້ຮັບ. ແຕ່ຖ້າຖືກລັກ ຫຼື ຖືກທຳລາຍ, ທ່ານຕ້ອງລາຍງານພາຍໃນສິບ (10) ວັນ ພາຍຫຼັງ ທີ່ຖືກລັກ ຫຼື ຖືກທຳລາຍ.
- ຖ້າທ່ານໄດ້ຮັບສະຫວັດດີການຄ່າອາຫານຫຼາຍເກີນໄປ, ທ່ານຈະຕ້ອງໄດ້ຈ່າຍຄືນ ແລະ/ຫຼື ສະຫວັດດີການຂອງທ່ານ ອາດຫຼຸດລົງ ຫຼື ຖືກຢຸດເຊົາ. ເລກປະກັນສັງຄົມ (SSN) ຂອງທ່ານ ອາດຖືກໃຊ້ເພື່ອເກັບກຳມູນຄ່າ ສະຫວັດດີການທີ່ຕົດໜີ້ ໂດຍຜ່ານສານ, ໜ່ວຍງານຈັດເກັບອື່ນໆ ແລະ ເພື່ອການດຳເນີນການຈັດເກັບຂອງ ລັດຖະບານກາງ.
- ເລກ SSN ຂອງທ່ານ ຈະຖືກໃຊ້ເພື່ອກວດສອບຫຼັກຖານປະຈຳຕົວຂອງທ່ານ ເພື່ອປ້ອງກັນການຊຳ້ຊ້ອນ ແລະ ກວດສອບສິດໃນການໄດ້ຮັບ ແລະ ສະຫວັດດີການ. ເລກ SSN ຈະຖືກໃຊ້ໃນການກວດສອບທາງຄອມພິວເຕີ ເພື່ອເບິ່ງລາຍໄດ້ ແລະ ຊັບສນຂອງທ່ານ ຈາກການບັນທຶກອາກອນ, ສະຫວັດດີການ, ການຈ້າງງານ, ສຳນັກງານປະກັນສັງຄົມ ແລະ ໜ່ວຍງານອື່ນໆ. ຖ້າມີຄວາມແຕກຕ່າງ ອາດຈະໄດ້ ກວດສອບກັບທ່ານ, ນາຍຈ້າງ, ທະນາຄານ ຫຼື ອື່ນໆ. ຜູ້ທີ່ສໍ້ໂກງໃນໂຄງການ ສະຫວັດດີການຄ່າອາຫານ ອາດຈະໄດ້ຮັບການດຳເນີນການ ທາງແພ່ງ ຫຼື ທາງອາຍາ ຫຼື ການຮ້ອງຟ້ອງອື່ນໆ.
- ທ່ານບໍ່ຈຳເປັນຕ້ອງໃຫ້ເລກ SSN ຂອງທ່ານ ໃນເວລາຍື່ນໃບສະໝັກຄັ້ງທຳອິດ. ເຖິງຢ່າງໃດກໍ່ຕາມ, ທ່ານຈະໄດ້ຖືກຖາມເພື່ອໃຫ້ຂໍ້ມູນແກ່ພວກເຮົາ ໃນການພິຈາລະນາສິດ ໃນການໄດ້ຮັບ ແລະ ສະຫວັດດີການ ສຳຫຼັບສະມາຊິກ ຄົນອື່ນໆ ໃນຄອບຄົວທ່ານ. ຕາມປົກກະຕິ ທ່ານຕ້ອງໃຫ້ເລກ SSN ຫຼື ຫຼັກຖານສະແດງການຍື່ນຂໍເລກ SSN ຂອງທ່ານ ກ່ອນທີ່ພວກເຮົາ ຈະສາມາດໃຫ້ສະຫວັດດີໃດໆ ແກ່ທ່ານ. ພວກເຮົາສາມາດ ປະຕິເສດການໃຫ້ສະຫວັດດີການ ແກ່ ທ່ານ ຫຼື ສະມາຊິກ ຄົນໃດໜຶ່ງໃນຄອບຄົວທ່ານ ຖ້າບໍ່ມີການໃຫ້ SSN.

ຄຳຮ້ອງຮຽນ ແລະ ການຮ້ອງຮຽນຕໍ່ລັດ

ຖ້າທ່ານຕ້ອງການຮ້ອງຮຽນ, ພະຍາຍາມຮ້ອງຮຽນກັບເທດສະບານ. ຖ້າບໍ່ໄດ້ຜົນ, ທ່ານອາດ ໂທ ຫຼື ຂຽນ ເຖິງ:

California Department of Social Services
744 P Street, MS 8-16-50
Sacramento, CA 95814
ໂທລະສັບ: 1-800-952-5253,
ຫຼື ຜູ້ທີ່ມີບນຫາໃນການຟັງ ແລະ ເວົ້າ ໂທ
1-800-952-8349

ຖ້າທ່ານຄິດວ່າການດຳເນີນການໃດໆຂອງເທດສະບານ ບໍ່ຖືກຕ້ອງ, ທ່ານສາມາດ ຮ້ອງຮຽນຕໍ່ລັດ ໂດຍຂຽນເຖິງສຳນັກງານປະຊາສົງເຄາະໃນເຂດທ່ານ ຫຼື ໂທຕາມ ໝາຍເລກໂທລະສັບຂ້າງເທິງ. ທ່ານຕ້ອງຮ້ອງຮຽນພາຍໃນ ເກົ້າສິບ (90) ວັນ ພາຍຫຼັງທີ່ມີການດຳເນີນການ ດັ່ງກ່າວພ້ອມທັງອະທິບາຍເຫດຜົນໃນການຮ້ອງຮຽນ ຂອງທ່ານ.

ກົດໝາຍລະບຸວ່າ ຜູ້ສະໝັກ/ຜູ້ໄດ້ຮັບ ເງິນຊ່ວຍເຫຼືອ, ສະຫວັດດີການ ຫຼື ບໍລິການ ປະຊາສົງເຄາະ ຈະຕ້ອງໄດ້ຮັບການປະຕິບັດຢ່າງຍຸຕິທຳ ໂດຍປາສະຈາກ ການຈຳແນກເຊື້ອຊາດ, ສີຜິວ, ເຊື້ອສາຍ, ແນວຄິດການເມືອງ, ສາດສະໜາ, ສະຖານະພາບສົມລົດ, ເພດ, ໄວ ຫຼື ຄວາມພິການ.

ຖ້າທ່ານຄິດວ່າ ຕົນເອງຖືກຈຳແນກ, ທ່ານອາດຮ້ອງຮຽນ ໂດຍການ:

1. ຕິດຕໍ່ຜູ້ປະສານງານສິດທິພນລະເມືອງໃນເທດສະບານຂອງທ່ານ; ຫຼື
2. ຂຽນ ຫຼື ໂທຫາ:

   The State's Civil Rights Bureau, M.S. 8-16-70
   P.O. Box 944243, Sacramento, CA 94244-2430
   1-866-741-6241 (ໂທຟຣີ)

3. *ຫຼື ສະເພາະແຕ່ກ່ຽວກັບສະຫວັດດີການຄ່າອາຫານ, ຂຽນເຖິງ:*

   Secretary of Agriculture
   U.S. Department of Agriculture
   14th & Independence Avenue, S.W.
   Room 200A
   Administration Building
   Washington, D.C. 20250

ການສະໝັກຂໍສະຫວັດດີການຄ່າອາຫານ

ຂໍ້ມູນຜູ້ສະໝັກ

1. ກະລຸນາຕື່ມຂໍ້ມູນສ່ວນຕົວລຸ່ມນີ້ ສຳຫຼັບບຸກຄົນທີ່ສະໝັກຂໍສະຫວັດດີການຄ່າອາຫານ.

ຊື່ນາມສະກຸນ (ນາມສະກຸນ, ຊື່, ຊື່ກາງ)	
ເລກໂທລະສັບ (ລວມທັງ ລະຫັດເຂດ)	
ທີ່ຢູ່ (ຖະໜົນ, ຕູ້ ປນ, ອາພາດເມັນ.)	
ເມືອງ, ລັດ, ລະຫັດໄປສະນີ	
ທີ່ຢູ່ທາງໄປສະນີ (ຖ້າແຕກຕ່າງຈາກຂ້າງເທິງ)	
ເມືອງ, ລັດ, ລະຫັດໄປສະນີ	

2. ສຳນັກງານຄ່າອາຫານ ສາມາດໃຫ້ບໍລິການນາຍພາສາແກ່ທ່ານ ໂດຍບໍ່ເສຍຄ່າໃຊ້ຈ່າຍ. ທ່ານຕ້ອງການ ນາຍພາສາໃນການສຳພາດຂອງທ່ານບໍ? ☐ ຕ້ອງການ ☐ ບໍ່ຕ້ອງການ ຖ້າ "ຕ້ອງການ", ພາສາໃດ? _____

3. ເພື່ອຊ່ວຍໃຫ້ພວກເຮົາປັບປຸງການບໍລິການຂອງພວກເຮົາແກ່ທ່ານ, ກະລຸນາຕື່ມຂໍ້ມູນໃນຂໍ້ A ແລະ B ດັ່ງລຸ່ມນີ້. ຈົ່ງກວດກາໝົດທຸກຢ່າງທີ່ມັນກ່ຽວກັບທ່ານ. ກົດໝາຍລະບຸເອົາໃວ້ວ່າພວກເຮົາຕ້ອງບັນທຶກກຸ່ມເຜົ່າ ຊົນ, ເຊື້ອຊາດແລະພາສາຂອງທ່ານ. ຖ້າທ່ານຫາກບໍ່ທຳຕາມລາຍການທັງໝົດນີ້ແລ້ວ, ການປົກຄອງເຂດຈະເປັນຜູ້ທຳໃຫ້ທ່ານ. ນີ້ກໍຈະບໍ່ກະທົບຕໍ່ຄວາມເໝາະຂອງທ່ານ.

A. **ຊົນເຜົ່າ** (ທຸກຄົນຕ້ອງຕອບເປັນ ຂ ເຊ່ນກັນ) ທ່ານເປັນເຊື້ອສາຍສະເປນ ຫລືວ່າລາຕິນ? ☐ ແມ່ນ ☐ ບໍ່ແມ່ນ

B. **ເຊື້ອຊາດ/ເດີນມາຈາກຊົນເຜົ່າ –** ໃຫ້ກວດກ່ອງທັງໝົດທີ່ກ່ຽວກັບທ່ານ. ຖ້າທ່ານຫາກບໍ່ເຮັດຕາມລາຍການ ເຫລົ່ານີ້ແລ້ວທາງການປົກຄອງເຂດຈະເຮັດໃຫ້ທ່ານ. ນີ້ກໍຈະບໍ່ກະທົບຕໍ່ຄວາມເໝາະຂອງທ່ານ.

☐ ເປັນຄົນອາເມຣິກັນເຊື້ອສາຍອິນເດຍ ຫລືວ່າ ເປັນຄົນພື້ນເມືອງ ອາລາສກາ
☐ ເປັນຄົນອາເມຣິກາດຳຫລືວ່າຄົນອາເມຣິກາເຊື້ອສາຍອາຟຣິກາ
☐ ເປັນຄົນເອເຊຍ(ເມື່ອກວດເບິ່ງແລ້ວໃຫ້ເລືອກເອົາໜຶ່ງຫລືຫລາຍກ່ວານັ້ນ)
☐ ເປັນເຊື້ອສາຍຟິລິບປິນ ☐ ເປັນເຊື້ອສາຍຈີນ ☐ ເປັນເຊື້ອສາຍຍີ່ປຸ່ນ ☐ ເປັນເຊື້ອສາຍກຳພູຊາ ☐ ເປັນເຊື້ອສາຍເກົາຫລີ
☐ ເປັນເຊື້ອສາຍລາວ ☐ ເປັນເຊື້ອສາຍເອເຊຍອິນເດຍ ☐ ເປັນເຊື້ອສາຍລາວ ☐ ເປັນເຊື້ອສາຍເອເຊຍອື່ນໆ (ໃຫ້ບອກລະອຽດ)____
☐ ເປັນເຊື້ອສາຍຮາວາຍຫລືຈາກເກາະປາຊີຟິກແຫ່ງອື່ນໆ (ເມື່ອກວດເບິ່ງ, ກະຣຸນາເລືອກເອົາໜຶ່ງຫລືຫລາຍກ່ວານັ້ນຈາກລຸ່ມນີ້)
☐ ເປັນເຊື້ອສາຍຮາວາຍ ☐ ເປັນເຊື້ອສາຍກົວມາເນຍ ☐ ເປັນເຊື້ອສາຍຊາມວນ ☐ ອື່ນໆ (ບອກລະອຽດ)_____
☐ ຄົນຜິວຂາວ

C. **ພາສາທຳອິດ –** ☐ ອັງກິດ ☐ ສະເປນ ☐ ລາວ ☐ ຕາກາລ້ອກ ☐ ສັນຍາລັກອາເມລິກາ
☐ ຈີນກວາງຕຸ້ງ ☐ ກຳປູເຈຍ ☐ ຫວຽດ ☐ ລັດເຊຍ
☐ ອື່ນໆ (*ໂປດລະບຸ*)_____

✔4. ບາງຄົນໃນຄອບຄົວເປັນ: (ເລືອກໄດ້ຫຼາຍກ່ວາໜຶ່ງຂໍ້ ຖ້າເໝາະສົມ)

☐ ພິການ
☐ ຄົນຊະລາ (ອາຍຸ 60 ປີ & ແກ່ກວ່າ)
☐ ບໍ່ມີເງິນຊື້ອາຫານ
☐ ໄຮ້ບ້ານ
☐ ຄົນອົບພະຍົບ/ກຳມະກອນໃນຟາມຕາມລະດູການ – ມີແຕ່ລາຍໄດ້ຂອງທ່ານຖືກຍຸດເຊົາບໍ? ☐ ແມ່ນ ☐ ບໍ່ແມ່ນ

5. ທ່ານມີສະພາບທາງຮ່າງກາຍ ແລະ ຈິດທີ່ຕ້ອງການຄວາມຊ່ວຍເຫຼືອພິເສດ ໃນລະຫວ່າງ ການສຳພາດຂອງທ່ານກັບ ເຈົ້າໜ້າທີ່ຄ່າອາຫານ? ☐ ແມ່ນ ☐ ບໍ່ແມ່ນ

✔6. ຄ່າເຊົ່າ ຫຼື ຄ່າຜ່ອນບ້ານຂອງທ່ານໃນເດືອນນີ້ ຫຼາຍປານໃດ? $_____

✔7. ຄ່ານ້ຳຄ່າໄຟຂອງທ່ານໃນເດືອນນີ້ ຫຼາຍປານໃດ, ຖ້າຄິດໄລ່ແຍກຈາກຄ່າເຊົ່າ ຫຼື ຄ່າຜ່ອນບ້ານຂອງທ່ານ? $_____

ຂ້າພະເຈົ້າໄດ້ຮັບແຈ້ງກ່ຽວກັບການໄດ້ຮັບສະຫວັດດີການຄ່າອາຫານແບບກະທັດຮັດ ພາຍໃນ ສາມ (3) ວັນ.

_____ _____
ລາຍເຊັນ ວັນທີ

ສຳຫຼັບເຈົ້າໜ້າທີ່ເທົ່ານັ້ນ:

Case Name _____ **Case #** _____
Application Type: ☐ **New** ☐ **Recert** **Date received by County** _____
Screened for Expedited Service (ES)? ☐ **Yes** ☐ **No** **ES Eligible** ☐ **Yes** ☐ **No**

ການສະໝັກຂໍສະຫວັດດີການດ້ານອາຫານ

ຂໍ້ມູນກ່ຽວກັບຄອບຄົວ

8. ຕື່ມຂໍ້ມູນຕໍ່ໄປນີ້ ສຳຫຼັບທຸກຄົນໃນບ້ານ ລວມທັງຕົວທ່ານເອງ. ເຫດສະບານຈະໃຊ້ຂໍ້ມູນນີ້ເພື່ອພິຈາລະນາສິດໄດ້ຮັບ ສະຫວັດດີການເທົ່ານັ້ນ.

ຊື່ (ນາມສະກຸນ, ຊື່, ຊື່ກາງ)	ເລກປະກັນສັງຄົມ (ຖ້າບໍ່ມີ, ຂຽນບໍ່ມີ)	ສາຍພົວພັນ (ລູກຊາຍ, ເມຍ, ໝູ, ລູກລ້ຽງ ແລະ ອື່ນໆ.)	ເລືອກຂໍ້ໜຶ່ງ	ວັນເດືອນປີເກີດ	ທ່ານຊື້ ແລະ ແຕ່ງກິນກັບບຸກຄົນນີ້ບໍ? (ເລືອກຂໍ້ໜຶ່ງ)
1.			ຊາຍ/ຍິງ		ແມ່ນ / ບໍ່ແມ່ນ
2.			ຊາຍ/ຍິງ		ແມ່ນ / ບໍ່ແມ່ນ
3.			ຊາຍ/ຍິງ		ແມ່ນ / ບໍ່ແມ່ນ
4.			ຊາຍ/ຍິງ		ແມ່ນ / ບໍ່ແມ່ນ
5.			ຊາຍ/ຍິງ		ແມ່ນ / ບໍ່ແມ່ນ
6.			ຊາຍ/ຍິງ		ແມ່ນ / ບໍ່ແມ່ນ
7.			ຊາຍ/ຍິງ		ແມ່ນ / ບໍ່ແມ່ນ
8.			ຊາຍ/ຍິງ		ແມ່ນ / ບໍ່ແມ່ນ
9.			ຊາຍ/ຍິງ		ແມ່ນ / ບໍ່ແມ່ນ
10.			ຊາຍ/ຍິງ		ແມ່ນ / ບໍ່ແມ່ນ

ລາຍໄດ້ ແລະ ການເຮັດວຽກ

✔ 9. ທ່ານມີ ຫຼື ທ່ານຈະໄດ້ຮັບລາຍໄດ້ໃດໜຶ່ງໃນເດືອນນີ້ບໍ? ☐ ແມ່ນ ☐ ບໍ່ແມ່ນ

ລະບຸລາຍໄດ້ຄອບຄົວຂອງທ່ານ ດັ່ງລຸ່ມນີ້:

ຊື່ນາມສະກຸນຜູ້ຮັບເງິນ	ຫຼາຍປານໃນແຕ່ລະເດືອນ?
	$
	$
	$
	$

ຊັບສິນ

✔ 10. ທ່ານມີເງິນຫຼາຍປານໃດ? ລວມທັງເງິນໃນທະນາຄານ, ໃນບ້ານ ຫຼື ບ່ອນອື່ນໆ.

$ _____

ສຳຫຼັບເຈົ້າໜ້າທີ່ເທົ່ານັ້ນ:

ການສະໝັກຂໍສະຫວັດດີການຄ່າອາຫານ

ຂໍ້ມູນສຳຄັນ

- ➤ ກົມກະສິກຳສະຫະລັດ (USDA) ຫ້າມການຈຳແນກການດຳເນີນໂຄງການ ແລະ ກົດຈະກຳທຸກຢ່າງ ບົນພື້ນຖານ ເຊື້ອສາຍ, ສີຜິດ, ເພດ, ສາດສະໜາ, ເຊື້ອຊາດ ຫຼື ຄວາມເຊື່ອທາງການເມືອງ. ທ່ານອາດຮ້ອງຮຽນ ຖ້າທ່ານເຊື່ອວ່າ ຕົນເອງຖືກຈຳແນກ. ຖ້າທ່ານ ບໍ່ເຫັນດີກັບການຕັດສິນໃຈຂອງເຫດສະບານ, ທ່ານສາມາດຮ້ອງຮຽນໄດ້.
- ➤ ຂໍ້ມູນໃນໃບສະໝັກນີ້ ອາດມີການເປີດເຜີຍແກ່ໜ່ວຍງານລັດຖະບານກາງ, ຂອງລັດ ແລະ ທ້ອງຖິ່ນ ເພື່ອແຕ່ຈຸດປະສົງ ໃນການກວດສອບສິດໃນການໄດ້ຮັບ ສະຫວັດດີການຄ່າອາຫານ ເທົ່ານັ້ນ. ຂັ້ນຕອນນີ້ ອາດລວມມີ ການຢັ້ງຢືນກັບ ສຳນັກງານບໍລິການພົນລະເມືອງ ແລະ ຄົນເຂົ້າເມືອງສະຫະລັດ (USCIS) (ເມື່ອກ່ອນເອີ້ນວ່າ INS) ກ່ຽວກັບ ສະຖານະພາບ ການເຂົ້າເມືອງຂອງຜູ້ທີ່ສະໝັກຂໍສະຫວັດດີການຄ່າອາຫານ ເທົ່ານັ້ນ. ກົດໝາຍລັດຖະບານກາງ ລະບຸວ່າ USCIS ບໍ່ສາມາດໃຊ້ຂໍ້ມູນນີ້ໄດ້ ນອກເໜືອຈາກ ກໍລະນີມີການສໍ້ໂກງ.

ລາຍເຊັນ

ພາຍໃຕ້ບົດລົງ�โทດຂອງກົດໝາຍສະຫະລັດອາເມລິກາ ແລະ ລັດແຄລິຟໍເນຍ, ຂ້າພະເຈົ້າຮັບຮອງว่า ຂໍ້ມູນທີ່ຂ້າພະເຈົ້າ ໄດ້ໃຫ້ໃນໃບສະໝັກນີ້ ເປັນຄວາມຈິງ, ຖືກຕ້ອງ, ແລະ ຄົບຖ້ວນ.

ລາຍເຊັນ (ສະມາຊິກຄອບຄົວທີ່ເປັນຜູ້ໃຫຍ່ ຫຼື ຕາງໜ້າທີ່ໄດ້ຮັບມອບໝາຍ)	ວັນທີ
ລາຍເຊັນ ພະຍານ ຫຼື ນາຍພາສາ	ວັນທີ
ລາຍເຊັນພະນັກງານກວດສອບສິດ	ວັນທີ